ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ສະພາປະຊາຊົນແຂວງ

ເລກທີ...11...../ສພຂ.ຊຍ

ໄຊຍະບູລີ, ວັນທີ..14...ພຶດສະພາ 2021

# ມະຕິ

## ກອງປະຊຸມສະພາປະຊາຊົນແຂວງ

## ວ່າດ້ວຍ ການຮັບຮອງເອົາການຈັດຕັ້ງປະຕິບັດ ແຜນພັດທະນາເສດຖະກິດ-ສັງຄົມຂອງແຂວງ 05 ປີ ຄັ້ງທີ VI (2016-2020) ແລະ ທິດທາງແຜນການ 05 ປີ ຄັ້ງທີ VII (2021-2025)

- ອີງຕາມ ລັດຖະທຳມະນູນແຫ່ງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ (ສະບັບປັບປຸງ) ປີ2015 ມາດຕາ 77 ກ່ຽວກັບສິດ ແລະ ໜ້າທີ່ ຂອງສະພາປະຊາຊົນຂັ້ນແຂວງ;
- ອີງຕາມ ກົດໝາຍວ່າດ້ວຍການປັບປຸງບາງມາດຕາ ຂອງກົດໝາຍວ່າດ້ວຍ ສະພາແຫ່ງຊາດ ແລະ ສະພາປະຊາຊົນແຂວງ ເລກທີ 82/ສພຊ. ລົງວັນທີ 30 ມິຖຸນາ 2020 ມາດຕາ 57 ກ່ຽວກັບກອງປະຊຸມຄັ້ງປະຖົມມະລຶກຂອງສະພາປະຊາຊົນຂັ້ນແຂວງ;
- ອີງຕາມ ແຈ້ງການຂອງຄະນະປະຈຳສະພາແຫ່ງຊາດ ສະບັບເລກທີ 03/ຄປຈ, ລົງວັນທີ 22 ເມສາ 2021 ວ່າດ້ວຍການດຳເນີນກອງປະຊຸມຄັ້ງປະຖົມມະລຶກ ຂອງສະພາປະຊາຊົນຂັ້ນແຂວງ;
- ອີງຕາມ ບົດລາຍງານຂອງອົງການປົກຄອງແຂວງ, ຄັ້ງວັນທີ 26 ເມສາ 2021 ກ່ຽວກັບ ການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມຂອງແຂວງ 05 ປີ ຄັ້ງທີ VI (2016-2020) ແລະ ທິດທາງແຜນພັດທະນາເສດຖະກິດ-ສັງຄົມຂອງແຂວງ 05 ປີ ຄັ້ງທີ VII (2021-2025).

ຜ່ານການຄົ້ນຄວ້າ, ພິຈາລະນາ ແລະ ປະກອບຄຳເຫັນ ຢ່າງກວ້າງຂວາງ ແລະ ເລິກເຊິ່ງ ຕໍ່ບົດລາຍງານຂອງອົງການປົກຄອງແຂວງ ກ່ຽວກັບ ການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມຂອງແຂວງ 05 ປີ ຄັ້ງທີ VI (2016-2020) ແລະ ທິດທາງແຜນພັດທະນາເສດຖະກິດ-ສັງຄົມຂອງແຂວງ 05 ປີ ຄັ້ງທີ VII (2021-2025) ໃນກອງປະຊຸມຄັ້ງປະຖົມມະລຶກຂອງສະພາປະຊາຊົນແຂວງ ຊຸດທີ II ຄັ້ງວັນທີ 26 ເມສາ 2021 ແລະ ກອງປະຊຸມຄະນະປະຈຳສະພາປະຊາຊົນແຂວງ ຄັ້ງວັນທີ 10 ພຶດສະພາ 2021.

## ກອງປະຊຸມຕົກລົງ:

**ມາດຕາ 1 ຮັບຮອງເອົາ ບົດລາຍງານຂອງອົງການປົກຄອງແຂວງ ກ່ຽວກັບການຈັດຕັ້ງປະຕິບັດ ແຜນພັດທະນາເສດຖະກິດ-ສັງຄົມຂອງແຂວງ 05 ປີ ຄັ້ງທີ VI (2016-2020).**

ກອງປະຊຸມສະແດງຄວາມຍ້ອງຍໍຊົມເຊີຍທີ່ອົງການປົກຄອງແຂວງ ໄດ້ມີຄວາມພະຍາຍາມສູ້ຊົນຜ່ານຜ່າຄວາມຫຍຸ້ງຍາກ ແລະ ສິ່ງທ້າທາຍຫຼາຍປະການ ໃນການຈັດຕັ້ງປະຕິບັດແຜນພັດທະນາ

ເສດຖະກິດ-ສັງຄົມຂອງແຂວງ 5 ປີ ຄັ້ງທີ VI (2016-2020) ໃນທ່າມກາງທີ່ສະພາບການທາງດ້ານການເມືອງ, ເສດຖະກິດການເງິນຂອງພາກພື້ນ ແລະ ສາກົນ ມີການຜັນແປຢ່າງສັບສົນ, ການແຜ່ລະບາດຂອງພະຍາດໂຄວິດ-19, ການປ່ຽນແປງດິນຟ້າອາກາດ ແລະ ສະພາບຄວາມຫຍຸ້ງຍາກພາຍໃນຂອງປະເທດເຮົາ ໄດ້ສົ່ງຜົນກະທົບທາງກົງ ແລະ ທາງອ້ອມ ຕໍ່ການພັດທະນາເສດຖະກິດ-ສັງຄົມຂອງແຂວງ ເປັນຕົ້ນຄວາມບອບບາງ ແລະ ຄວາມຫຍຸ້ງຍາກທາງດ້ານເສດຖະກິດ-ການເງິນ, ໄພພິບັດທາງທຳມະຊາດ, ການລະບາດຂອງພະຍາດສັດ-ສັດຕູພືດ ແລະ ການແຜ່ລະບາດຂອງພະຍາດຕາມລະດູການ. ແຕ່ແຂວງເຮົາສາມາດຮັກສາໄດ້ສະຖຽນລະພາບທາງດ້ານການເມືອງ, ສັງຄົມມີຄວາມສະຫງົບ ແລະ ຄວາມເປັນລະບຽບຮຽບຮ້ອຍຢ່າງໜັກແໜ້ນ, ປະຊາຊົນບັນດາເຜົ່າມີຄວາມສາມັກຄີປອງດອງເປັນປຶກແຜ່ນ, ຄຸນນະພາບຊີວິດເປັນເປັນຢູ່ຂອງປະຊາຊົນໄດ້ຮັບການປັບປຸງ ແລະ ມີການປ່ຽນແປງທີ່ດີຂຶ້ນເທື່ອລະກ້າວ, ເສດຖະກິດຍັງສືບຕໍ່ຂະຫຍາຍຕົວຢ່າງຕໍ່ເນື່ອງ (2016-2020) ສະເລ່ຍຢູ່ໃນລະດັບ 6,7% ຕໍ່ປີ, ລາຍໄດ້ສະເລ່ຍຕໍ່ຫົວຄົນມາເຖິງປີ 2020 ບັນລຸໄດ້ 3.031 ໂດລາສະຫະລັດ/ຄົນ/ປີ, ອັດຕາຄອບຄົວທຸກຍາກຍັງເຫຼືອ 1,62% ຂອງຄອບຄົວທັງໝົດໃນປັດຈຸບັນ ແລະ ບ້ານທຸກຍາກ 12 ບ້ານ ເທົ່າກັບ 2,78% ຂອງບ້ານທັງໝົດພາຍໃນແຂວງ.

**ມາດຕາ 2 ຮັບຮອງເອົາທິດທາງແຜນພັດທະນາເສດຖະກິດ-ສັງຄົມ ຂອງແຂວງ 05 ປີ ຄັ້ງທີ VII (2021-2025).**

ກອງປະຊຸມເຫັນດີເປັນເອກະພາບຕໍ່ກັບບົດລາຍງານຂອງອົງການປົກຄອງແຂວງ ໂດຍສະເພາະແມ່ນການກຳນົດ 05 ທິດທາງລວມ, 06 ເປົ້າໝາຍ, 16 ແຜນງານໃຫຍ່, 285 ໂຄງການ ບຸລິມະສິດຂອງການລົງທຶນ ແລະ ບັນດາມາດຕະການຈັດຕັ້ງປະຕິບັດ, ເພື່ອເຮັດໃຫ້ແຜນດັ່ງກ່າວສາມາດຈັດຕັ້ງປະຕິບັດສຳເລັດ ຕາມຄາດໝາຍທີ່ວາງໄວ້, ພ້ອມທັງຮັບຮອງເອົາບັນດາຄາດໝາຍສູ້ຊົນແຕ່ລະດ້ານດັ່ງນີ້:

**1. ຄາດໝາຍເສດຖະກິດມະຫາພາກ.**

**1.1) ການຂະຫຍາຍຕົວຂອງເສດຖະກິດ**

ຄາດຄະເນອັດຕາການເຕີບໂຕຂອງເສດຖະກິດ ສະເລ່ຍບໍ່ໃຫ້ຫຼຸດ 7% ຕໍ່ປີ, ລວມຍອດຜະລິດຕະພາຍໃນຮອດປີ 2025 ໃຫ້ບັນລຸ 15.181 ຕື້ກີບ, ສະເລ່ຍຕໍ່ຫົວຄົນໃຫ້ໄດ 3.800 ໂດລາສະຫະລັດ, ໃນນັ້ນ:

- ຂະແໜງກະສິກຳ ໃຫ້ເພີ່ມຂຶ້ນ 2,5% ກວມເອົາ 22,4% ຂອງ GDP;
- ຂະແໜງອຸດສາຫະກຳ ໃຫ້ເພີ່ມຂຶ້ນ 9,3% ກວມເອົາ 39,9% ຂອງ GDP;
- ຂະແໜງການບໍລິການ ໃຫ້ເພີ່ມຂຶ້ນ 7,4% ກວມເອົາ 37,7% ຂອງ GDP.

**1.2) ດ້ານງົບປະມານ**

- ສູ້ຊົນເກັບລາຍຮັບເຂົ້າງົບປະມານໃຫ້ໄດ້ 5.178,54 ຕື້ກີບ;
- ຄຸ້ມຄອງລາຍຈ່າຍໃຫ້ຢູ່ໃນລະດັບ 2.973,25 ຕື້ກີບ;
- ຄາດຄະເນການຂາດດຸນງົບປະມານ 1.943,22 ຕື້ກີບ.

**2. ຄາດໝາຍເສດຖະກິດຕາມຂະແໜງການ.**

**2.1) ຂະແໜງກະສິກຳ**

- ຜະລິດເຂົ້າໃຫ້ໄດ້ 188.000 ໂຕນ/ປີ, ໃນນີ້: ເຂົ້ານາປີ 155.300 ໂຕນ, ນາແຊງ 10.500 ໂຕນເຂົ້າໄຮ່

22.200 ໂຕນ, ຜະລິດເຂົ້າເປັນສິນຄ້າໃຫ້ໄດ້ 70.000 ໂຕນ, ໃນນັ້ນ ເຂົ້າຈ້າວ ໃຫ້ກວມເອົາ 30%;

- ຜົນຜະລິດພືດເປັນສິນຄ້າ ບໍ່ໃຫ້ຫຼຸດ 1.400.000 ໂຕນ/ປີ, ຜະລິດພືດເປັນສິນຄ້າຕາມມາດຕະຖານກະສິກຳທີ່ດີ (GAP) 20% ເພື່ອຊົມໃຊ້ຢູ່ພາຍໃນ ແລະ ເປັນສິນຄ້າເພື່ອສົ່ງອອກ;
- ຜົນຜະລິດພືດເປັນສະບຽງອາຫານບໍ່ໃຫ້ຫຼຸດ 180.000 ໂຕນ/ປີ, ໃນນີ້: ຜະລິດເຂົ້າໃຫ້ໄດ້ຕາມມາດຕະຖານກະສິກຳທີ່ດີ (GAP) 10%, ຜະລິດພືດໃຫ້ໄດ້ຕາມມາດຕະຖານກະສິກຳທີ່ດີ (GAP) ແລະ ກະສິກຳອິນຊີ (OA) ໃຫ້ໄດ້ 20%;
- ສ້າງບ້ານຕົວແບບດ້ານກະສິກຳ ໃຫ້ໄດ້ 70% ຂອງບ້ານທັງໝົດ;
- ຜະລິດຊີ້ນ, ປາ ແລະ ໄຂ່ ໃຫ້ໄດ້ 24.000 ໂຕນ/ປີ, ສະເລ່ຍບໍ່ໃຫ້ຫຼຸດ 55 ກິໂລ/ຄົນ/ປີ;
- ຝູງສັດໃຫຍ່ໃຫ້ຂະຫຍາຍຕົວສະເລ່ຍ 6% ຕໍ່ປີ, ໃນນີ້: ງົວໃຫ້ຂະຫຍາຍຕົວ 8%, ຄວາຍໃຫ້ຂະຫຍາຍຕົວ 4%, ໝູໃຫ້ຂະຫຍາຍຕົວ 6%, ແບ້ຂະຫຍາຍຕົວ 11,5% ແລະ ສັດປີກຂະຫຍາຍຕົວ 5,5%;
- ສູ້ຊົນສ້າງຕັ້ງກຸ່ມຜະລິດກະສິກຳໃຫ້ໄດ້ 288 ກຸ່ມຜະລິດ ແລະ ສ້າງສະຫະກອນໃຫ້ໄດ້ 2 ສະຫະກອນ: ຜະລິດກະສິກຳເປັນສິນຄ້າຢູ່ເມືອງພຽງ ແລະ ເມືອງຊຽງຮ່ອນ;
- ເຜີຍແຜ່ລະບຽບ, ກົດໝາຍ ແລະ ນິຕິກຳກ່ຽວກັບວຽກງານປ່າໄມ້ ໃຫ້ໄດ້ 60% ຂອງບ້ານໃນທົ່ວແຂວງ;
- ສູ້ຊົນສ້າງແຜນຄຸ້ມຄອງປ່າໄມ້ຂັ້ນບ້ານ ໃຫ້ໄດ້ 200 ບ້ານຂຶ້ນໄປ.

**2.2) ຂະແໜງອຸດສາຫະກຳ ແລະ ການຄ້າ**

- ສູ້ຊົນເຮັດໃຫ້ການຂະຫຍາຍຕົວດ້ານອຸດສາຫະກຳປຸງແຕ່ງ ແລະ ຫັດຖະກຳ ເພີ່ມຂຶ້ນສະເລ່ຍ 10-13% ຕໍ່ປີ ແລະ ສ້າງມູນຄ່າການຜະລິດດ້ານອຸດສາຫະກຳ ແລະ ຫັດຖະກຳ ໃຫ້ບັນລຸ 1.210 ຕື້ກີບ ໃນໄລຍະ 5 ປີ ແລະ ມູນຄ່າຈຳໜ່າຍຜະລິດດ້ານອຸດສາຫະກຳ ແລະ ຫັດຖະກຳ ໃຫ້ບັນລຸ 1.392 ຕື້ກີບ;
- ສູ້ຊົນເຮັດໃຫ້ການຈໍລະຈອນສິນຄ້າຢູ່ພາຍໃນ ໃຫ້ຂະຫຍາຍຕົວ 2% ຕໍ່ປີ;
- ສູ້ຊົນເຮັດໃຫ້ມູນຄ່າການສົ່ງອອກສິນຄ້າ ເພີ່ມຂຶ້ນສະເລ່ຍ 7% ຕໍ່ປີ, ນຳເຂົ້າສິນຄ້າໃຫ້ຢູ່ໃນລະດັບສະເລ່ຍ 6-8% ຕໍ່ປີ;
- ຄຸ້ມຄອງລາຄາສິນຄ້າໃນທ້ອງຕະຫຼາດ ບໍ່ໃຫ້ມີການເໜັງຕີງເກີນຄ່າມາດຕະຖານ ທີ່ກະຊວງອຸດສາຫະກຳ ແລະ ການຄ້າ ກຳນົດອອກ 12% ຂອງລາຄາສິນຄ້າ.

**2.3) ຂະແໜງພະລັງງານ ແລະ ບໍ່ແຮ່**

- ສູ້ຊົນສົ່ງເສີມໂຄງການແຫຼ່ງຜະລິດໄຟຟ້າໃຫ້ໄດ້ 55 MW (ເມັກກະວັດ);
- ຊຸກຍູ້, ສົ່ງເສີມ ແລະ ຄຸ້ມຄອງ ໂຮງງານປຸງແຕ່ງແຮ່ທອງຄຳ 1 ໂຮງງານ ແລະ ໂຮງງານປຸງແຕງແຮ່ທາດຟູອໍຣາຍ 2 ໂຮງງານ;
- ສູ້ຊົນຜະລິດຫີນປູນໃຫ້ໄດ້ 2,25 ລ້ານໂຕນ ໃນໄລຍະ 5 ປີ;
- ສູ້ຊົນໃຫ້ບ້ານໃນທົ່ວແຂວງໄດ້ຊົມໃຊ້ໄຟຟ້າຈາກລະບົບຈຳໜ່າຍໄຟຟ້າ 100% ແລະ ຄອບຄົວໃຊ້ໄຟຟ້າໃຫ້ໄດ້ 99% ຮອດປີ 2025.

**2.4) ຂະແໜງໂຍທາທິການ ແລະ ຂົນສົ່ງ**

- ສູ້ຊົນໃຫ້ບໍລິມາດການຂົນສົ່ງສິນຄ້າ ເພີ່ມຂຶ້ນ 10-12% ຕໍ່ປີ;

- ສູ້ຊົນໃຫ້ບໍລິມາດການຂົນສົ່ງໂດຍສານເພີ່ມຂຶ້ນ 16-18% ຕໍ່ປີ;
- ສູ້ຊົນສ້າງເສັ້ນທາງເຂົ້າເຖິງບ້ານ ໃຫ້ທຽວໄດ້ 2 ລະດູ ໃຫ້ກວມ 90% ຂອງຈຳນວນບ້ານທັງໝົດ;
- ສ້າງສະຖານນີຂົນສົ່ງໂດຍສານ ໃຫ້ໄດ້ 6 ແຫ່ງ;
- ສ້າງລະບົບສາງພັກສິນຄ້າ, ລະບົບໂລຈິດຕິກຕາມແລວທາງເສດຖະກິດ ຢູ່ດ່ານສາກົນໃຫ້ໄດ້ 4 ແຫ່ງ (ດ່ານສາກົນປາງມອນ, ນ້ຳເງິນ, ນ້ຳເຫືອງ ແລະ ດ່ານພູດູ່);
- ຍົກລະດັບເສັ້ນທາງປູຫີນເປັນທາງປູຢາງໃຫ້ເພີ່ມຂຶ້ນ 15% ຕໍ່ປີ;
- ສ້າງທ່າເຮືອບັກເຊື່ອມຕໍ່ແຂວງຕໍ່ແຂວງໃຫ້ໄດ້ 1 ແຫ່ງ (ຈຸດບ້ານຜາລຽບ);
- ຂະຫຍາຍນ້ຳປະປາໃຫ້ໄດ້ 1 ເມືອງ ແລະ ນ້ຳປະປາຊຸມຊົນໃຫ້ໄດ້ 10 ພື້ນທີ່;
- ສູ້ຊົນສ້າງຈຸດສາກໝໍ້ໄຟລົດໄຟຟ້າ ໃຫ້ໄດ້ 2 ແຫ່ງ ຢູ່ເທດສະບານແຂວງ;
- ສູ້ຊົນພັດທະນາ, ສະໜອງນ້ຳປະປາ ໃຫ້ເທດສະບານ, ເຂດຊຸມຊົນ, ຈຸດສຸມບ້ານໃຫຍ່ເປັນຕົວເມືອງນ້ອຍ ໃຫ້ໄດ້ 85% ຮອດປີ 2025.

**2.5) ຄາດໝາຍຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ.**

- ສູ້ຊົນອອກໃບຕາດິນໃຫ້ໄດ້ 35.000 ຕອນ, ສະເລ່ຍ 7.000 ຕອນຕໍ່ປີ;
- ສູ້ຊົນໃຫ້ເນື້ອທີ່ປ່າປົກຫຸ້ມ ກວມ 60% ຂຶ້ນໄປ ຂອງເນື້ອທີ່ປ່າທັງໝົດຂອງແຂວງ, ຟື້ນຟູປ່າໃຫ້ໄດ້ 75.000 ເຮັກຕາ, ສະເລ່ຍ 15.000 ເຮັກຕາ/ປີ ແລະ ປູກໄມ້ໃຫ້ໄດ້ 1.750 ເຮັກຕາ (ສະເລ່ຍ 350 ເຮັກຕາ/ປີ);
- ປັບປຸງ ແລະ ສ້າງລະບົບແຈ້ງເຕືອນໄພໃນຂອບເຂດທົ່ວແຂວງ ໃຫ້ໄດ້ 11 ຈຸດ;
- ສ້າງແຜນທີ່ ຄວາມສ່ຽງໄພພິບັດ ແລະ ແຜນກະກຽມຄວາມພ້ອມຕອບໂຕ້ ທີ່ມີຄວາມສ່ຽງຢູ່ 11 ເມືອງ;
- ສ້າງຄວາມເຂັ້ມແຂງວຽກງານຄຸ້ມຄອງໄພພິບັດ ໃຫ້ຄະນະກຳມະການຂັ້ນແຂວງ, ເມືອງ, ບ້ານ ແລະ ຝຶກຊ້ອມເຫດການຈຳລອງໄພພິບັດສຸກເສີນໃຫ້ໄດ້ 2 ຄັ້ງ;
- ຂະຫຍາຍຄະນະກຳມະການຄຸ້ມຄອງໄພພິບັດຂັ້ນເມືອງໃຫ້ກວມເອົາ 80% ຂອງຈຳນວນບ້ານທັງໝົດພາຍໃນແຂວງ;
- ເຜີຍແຜ່ລະບຽບ, ກົດໝາຍ ແລະ ນິຕິກຳກ່ຽວກັບວຽກງານປ່າໄມ້ ໃຫ້ໄດ້ 60% ຂອງບ້ານໃນທົ່ວແຂວງ;
- ສູ້ຊົນສ້າງແຜນຄຸ້ມຄອງປ່າໄມ້ຂັ້ນບ້ານ ໃຫ້ໄດ້ 200 ບ້ານຂຶ້ນໄປ;
- ພັດທະນາອ່າງຮັບນ້ຳ ໂດຍສະເພາະ 5 ອ່າງບູລິມະສິດຄື: ນ້ຳງື່ມ, ນ້ຳຣຸ່ງ, ນ້ຳຄອບ, ນ້ຳພູນ ແລະ ນ້ຳຮອຍ;
- ສ້າງບ້ານສີຂຽວສະອາດ ແລະ ງາມຕາ ໃຫ້ໄດ້ 30% ຂອງບ້ານທັງໝົດໃນທົ່ວແຂວງ;
- ອອກໃບຢັ້ງຢືນດ້ານສິ່ງແວດລ້ອມ ໃຫ້ໄດ້ 2.100 ຫົວໜ່ວຍ.

**2.6) ຂະແໜງໄປສະນີ ໂທລະຄົມມະນາຄົມ ແລະ ການສື່ສານ**

- ຂະຫຍາຍການບໍລິການ ການສື່ສານ ໂທລະສັບຕັ້ງໂຕະ ແລະ ມືຖື ໃຫ້ບັນລຸອັດຕາສ່ວນຜູ້ຊົມໃຊ້

100%, ດ້ານອິນເຕີເນັດ ໃຫ້ບັນລຸ ອັດຕາຜູ້ຊົມໃຊ້ 45% ຂອງຈຳນວນຜູ້ຊົມໃຊ້ໂທລະສັບ;

- ສືບຕໍ່ຊຸກຍູ້ສາຂາບໍລິສັດ ຂະຫຍາຍຕາໜ່າງດ້ານໂທລະຄົມມະນາຄົມ ເຂົ້າເຂດຫ່າງໄກ ແລະ ເຂດທີ່ບໍ່ມີສັນຍານ ຈຳນວນ 07 ບ້ານ, ບ້ານສັນຍານອ່ອນ 13 ບ້ານໃຫ້ສຳເລັດ;
- ສູ້ຊົນສ້າງເວັບໄຊ ຢູ່ສຳນັກງານ, ອົງການ ແລະ ເມືອງຕ່າງໆ ໃຫ້ໄດ້ຢ່າງໜ້ອຍ 15 ເວັບໄຊ.

**3. ຄາດໝາຍແຫຼ່ງທຶນເພື່ອການພັດທະນາ.**

ສູ້ຊົນລະດົມແຫຼ່ງທຶນເພື່ອການພັດທະນາໃຫ້ໄດ້ 4.251,8 ຕື້ກີບ ຫຼື ເທົ່າກັບ 28% ຂຶ້ນໄປ ຂອງລວມຍອດຜະລິດຕະພັນພາຍໃນ ໃນນີ້:

- ການລົງທຶນຈາກງົບປະມານພາຍໃນ ກວມເອົາ 7% ຂອງການລົງທຶນທັງໝົດ;
- ການຊ່ວຍເຫຼືອລ້າທາງການເພື່ອການພັດທະນາ (ODA) ກວມເອົາ 15% ຂອງການລົງທຶນທັງໝົດ;
- ການລົງທຶນຂອງເອກະຊົນພາຍໃນ ແລະ ຕ່າງປະເທດ ກວມເອົາ 55% ຂອງການລົງທຶນທັງໝົດ;
- ສິນເຊື່ອທະນາຄານ ແລະ ກອງທຶນທຸກປະເພດ ກວມເອົາ 23% ຂອງການລົງທຶນທັງໝົດ.

**4. ຄາດໝາຍວັດທະນະທຳ-ສັງຄົມ.**

**4.1) ຄາດໝາຍຂະແໜງສຶກສາທິການ-ກິລາ**

- ສູ້ຊົນໃຫ້ອັດຕາເຂົ້າຮຽນຂອງເດັກ 5 ປີ ໃຫ້ໄດ້ 98%;
- ຈຳນວນເມືອທີ່ບັນລຸອັດຕາເຂົ້າຮຽນຂອງເດັກ 5 ປີ ສູງກວ່າ 60% ໃຫ້ໄດ້ ທຸກໆເມືອງ;
- ຮັບປະກັນໃຫ້ ອັດຕາການເຂົ້າຮຽນສຸດທິຊັ້ນປະຖົມ (6-10ປີ) ໃຫ້ໄດ້ 99,5%;
- ຫຼຸດອັດຕາຄ້າງຫ້ອງຂັ້ນ ປ.1 ລົງໃຫ້ຕ່ຳກວ່າ 1%;
- ຫຼຸດອັດຕາຄ້າງຫ້ອງຊັ້ນປະຖົມ ລົງໃຫ້ຕ່ຳກວ່າ 1%;
- ຫຼຸດອັດຕາການປະລະຊັ້ນ ປ.1 ລົງໃຫ້ຕ່ຳກວ່າ 1%;
- ຫຼຸດອັດຕາການປະລະການຮຽນຊັ້ນປະຖົມ ລົງໃຫ້ຕ່ຳກວ່າ 1%;
- ເພີ່ມອັດຕາລອດເຫຼືອຮອດ ປ.5 ຂອງແຕ່ລະເມືອງ ໃຫ້ສູງກວ່າ 95%;
- ຈຳນວນເມືອງທີ່ມີອັດຕາປະລະຊັ້ນປະຖົມຕ່ຳກວ່າ 6% ໃຫ້ໄດ້ 11 ເມືອງ;
- ເພີ່ມອັດຕາການເຂົ້າຮຽນລວມ ມັດທະຍົມຕອນຕົ້ນໃຫ້ໄດ້ 95% ຂຶ້ນໄປ;
- ເພີ່ມອັດຕາການເຂົ້າຮຽນລວມ ມັດທະຍົມຕອນປາຍໃຫ້ໄດ້ 79% ຂຶ້ນໄປ;
- ຫຼຸດອັດຕາການປະລະມັດທະຍົມຕອນຕົ້ນລົງ ໃຫ້ຕ່ຳກວ່າ 3%;
- ອັດຕາສ່ວນນັກຮຽນຈົບ ມ.4 ເຂົ້າຮຽນຕໍ່ອາຊີວະສຶກສາ ໃຫ້ໄດ້ 2% ຂຶ້ນໄປ;
- ສົ່ງເສີມໃຫ້ນັກຮຽນທີ່ຮຽນຈົບຊັ້ນມັດທະຍົມຕອນປາຍ ສືບຕໍ່ຮຽນວິຊາຊີບລະດັບຕ່າງໆຢູ່ພາຍໃນ ແລະ ຕ່າງປະເທດ 80%;

- ສົ່ງເສີມໃຫ້ມວນຊົນທຸກເພດ, ທຸກໄວ ໄດ້ເຂົ້າຮ່ວມການຫັດກາຍະບໍລິຫານ, ການອອກກໍາລັງກາຍ ແລະ ການຫຼິ້ນກິລາ-ກາຍະກໍາ ໃຫ້ໄດ້ຫຼາຍກວ່າ 36% ຂອງພົນລະເມືອງ.

**4.2) ຄາດໝາຍຂະແໜງສາທາລະນະສຸກ**

- ສູ້ຊົນເຮັດໃຫ້ອັດຕາສ່ວນເດັກນ້ອຍ ລຸ່ມ 5 ປີ ທີ່ມີນໍ້າໜັກຫຼຸດມາດຕະຖານ ໃຫ້ຍັງເຫຼືອ 8,5% ຂອງຈໍານວນເດັກທີ່ມາຕິດຕາມທັງໝົດ;
- ສູ້ຊົນເຮັດໃຫ້ອັດຕາເດັກນ້ອຍ ລຸ່ມ 5 ປີ ທີ່ມີລວງສູງບໍ່ໄດ້ຕາມມາດຕະຖານ ໃຫ້ໄດ້ 8,7% ຂອງຈໍານວນເດັກທີ່ມາຕິດຕາມທັງໝົດ;
- ສູ້ຊົນເຮັດໃຫ້ອັດຕາສ່ວນ ການຕາຍຂອງເດັກນ້ອຍລຸ່ມ 1 ປີ ໃຫ້ໄດ້ 7/1.000 ຂອງເດັກເກີດມີຊີວິດ;
- ສູ້ຊົນເຮັດໃຫ້ອັດຕາສ່ວນ ການຕາຍຂອງເດັກນ້ອຍ 5 ປີ ໃຫ້ໄດ້ 8/1.000 ຂອງເດັກເກີດມີຊີວິດ;
- ສູ້ຊົນເຮັດໃຫ້ອັດຕາສ່ວນ ການຕາຍຂອງແມ່ໃຫ້ໄດ້ 62,6/100.000 ຂອງເດັກເກີດມີຊີວິດ;
- ສູ້ຊົນເຮັດໃຫ້ອັດຕາສ່ວນ ການເກີດລູກມີແພດຊ່ວຍ ໃຫ້ໄດ້ 85% ຂອງແມ່ມານເປົ້າໝາຍ;
- ສູ້ຊົນເຮັດໃຫ້ອັດຕາສ່ວນ ການສັກຢາວັກຊິນກັນພະຍາດ ໃນເດັກລຸ່ມ 1 ປີ ໃຫ້ໄດ້ 95% ຂອງເດັກເປົ້າໝາຍ;
- ສູ້ຊົນເຮັດໃຫ້ອັດຕາສ່ວນ ການຊົມໃຊ້ນໍ້າສະອາດ ໃຫ້ໄດ້ 95,9% ຂອງຈໍານວນປະຊາກອນ;
- ສູ້ຊົນເຮັດໃຫ້ອັດຕາສ່ວນ ການຊົມໃຊ້ວິດຖ່າຍ ໃຫ້ໄດ້ 100% ຂອງຈໍານວນຄົວເຮືອນທັງໝົດ;
- ສູ້ຊົນເຮັດໃຫ້ອັດຕາສ່ວນ ການປົກຄຸມປະກັນສຸຂະພາບ ໃຫໄດ້ 100% ຂອງຈໍານວນປະຊາກອນ;
- ສູ້ຊົນເຮັດໃຫ້ອັດຕາສ່ວນ ການຮັບຮອງ ແລະ ປະກາດບ້ານສາທາລະນະສຸກແບບຢ່າງໃຫ້ໄດ້ 94% ຂອງຈໍານວນບ້ານທັງໝົດ.

**4.3) ຄາດໝາຍຂະແໜງແຮງງານ ແລະ ສະຫວັດດີການ-ສັງຄົມ**

- ຝຶກອົບຮົມ ແລະ ພັດທະນາສີມືແຮງງານ ເພື່ອຕອບສະໜອງໃຫ້ແກ່ການພັດທະນາຕາມຂະແໜງການ ແລະ ໂຄງປະກອບເສດຖະກິດ ໃຫ້ໄດ້ 17.500 ຄົນ;
- ຈັດຫາວຽກເຮັດງານທໍາໃຫ້ແກ່ ກໍາລັງແຮງງານລາວ ເຂົ້າເຮັດວຽກ ໃຫ້ໄດ້ 20.000 ຄົນ;
- ສູ້ຊົນຂະຫຍາຍອັດຕາການປົກຄຸມປະກັນສັງຄົມ ໃຫ້ໄດ້ 5.000 ຄົນ;
- ປະຕິບັດນະໂຍບາຍ ໃຫ້ຜູ້ທີ່ມີຜົນງານຄຸນງາມຄວາມດີ ໃນພາລະກິດຮັບໃຊ້ການປະຕິວັດຊາດປະຊາທິປະໄຕ ໃຫ້ໄດ້ 1.440 ທ່ານ;
- ປຸກລະດົມເງິນເຂົ້າໃນກອງທຶນແຮຊ່ວຍເຫຼືອສຸກເສີນຜູ້ປະສົບໄພພິບັດ ໃຫ້ໄດ້ 600 ລ້ານກີບຕໍ່ປີ;
- ຂະຫຍາຍຕາໜ່າງປົກປ້ອງເດັກຂັ້ນບ້ານໃຫ້ກວມເອົາ 80% ຂອງຈໍານວນບ້ານທັງໝົດພາຍໃນແຂວງ;

- ຂະຫຍາຍຄະນະກຳມະການຄຸ້ມຄອງໄພພິບັດຂັ້ນບ້ານ ໃຫ້ກວມເອົາ 80% ຂອງຈຳນວນບ້ານທັງໝົດໃນທົ່ວແຂວງ;
- ລົງຮັບບໍລິຈາກເລືອດໃຫ້ໄດ້ 17.900 ຖົງ;
- ສ້າງບ້ານພັດທະນາດ້ານແຮງງານ ແລະ ສະຫວັດດີການສັງຄົມ ໃຫ້ກວມເອົາ 70% ຂອງຈຳນວນບ້ານທັງໝົດໃນທົ່ວແຂວງ.

**4.4) ຄາດໝາຍຂະແໜງຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ**

- ເອົາໃຈໃສ່ດຶງດູດນັກທ່ອງທ່ຽວ ໃຫ້ໄດ້ 175.000 ຄົນ/ຕໍ່ປີ, ສ້າງລາຍຮັບໃຫ້ໄດ້ຫຼາຍກວ່າ 7 ລ້ານໂດລາສະຫະລັດຕໍ່ປີ;
- ພັດທະນາແຫຼ່ງທ່ອງທ່ຽວໃຫ້ໄດ້ 05 ແຫ່ງ;
- ຂະຫຍາຍໂທລະໂຄ່ງຂອງບ້ານ ໃຫ້ໄດ້ 100%;
- ສ້າງຄອບຄົວວັດທະນະທຳ ໃຫ້ໄດ້ 3.500 ຄອບຄົວ, ບ້ານວັດທະນະທຳ ໃຫ້ໄດ້ 30 ບ້ານ, ບ້ານວັດທະນະທຳແບບຢ່າງ ໃຫ້ໄດ້ 10 ບ້ານ ແລະ ສ້າງກົມກອງວັດທະນະທຳ ໃຫ້ໄດ້ 90 ກົມກອງ;

**4.5) ຄາດໝາຍການພັດທະນາຊົນນະບົດ ແລະ ລຶບລ້າງຄວາມທຸກຍາກ.**

- ສູ້ຊົນເຮັດໃຫ້ຄອບຄົວບັນລຸມາດຕະຖານພົ້ນທຸກໃຫ້ໄດ້ 3.664 ຄອບຄົວ ລວມເປັນ 76.391 ຄອບຄົວ ເທົ່າກັບ 88,9% (ຍັງເຫຼືອບໍ່ເກີນ 3,2%) ແລະ ຂັ້ນບ້ານໃຫ້ພົ້ນທຸກໃຫ້ໄດ້ 42 ບ້ານ ລວມເປັນ 403 ບ້ານ ເທົ່າກັບ 92,3% ຍັງເຫຼືອບໍ່ເກີນ 7,7%; (ຕາມມາດຖານ 348/ລບ)
- ສູ້ຊົນເຮັດໃຫ້ຄອບຄົວບັນລຸມາດຕະຖານພັດທະນາເພີ່ມຂຶ້ນ 8.000 ຄອບຄົວ ລວມເປັນ 70.195 ຄອບຄົວ ເທົ່າກັບ 88,9% ແລະ ຂັ້ນບ້ານໃຫ້ບັນລຸມາດຕະຖານບ້ານພັດທະນາ ເພີ່ມຂຶ້ນ 140 ບ້ານ, ລວມເປັນ 193 ບ້ານ ເທົ່າກັບ 44,6%;
- ສູ້ຊົນສ້າງບ້ານໃຫຍ່ໃຫ້ເປັນຕົວເມືອງນ້ອຍໃນຊົນນະບົດໃຫ້ໄດ້ 8 ຈຸດ ຄື: ຈຸດນາມອນ, ທົ່ງກາບ, ບ້ານທອງ, ນາແວນ, ບົວບານ, ວັງປາ, ປາກແຄມ ແລະ ບ້ານຕົ້ນຕານ;
- ສູ້ຊົນສ້າງເມືອງບັນລຸມາດຕະຖານພົ້ນທຸກ ໃຫ້ໄດ້ 3 ເມືອງ ຄື: ເມືອງ ໄຊຍະບູລີ, ຊຽງຮ່ອນ ແລະ ເມືອງຄອບ;
- ສູ້ຊົນສ້າງເມືອງເຂັ້ມແຂງຮອບດ້ານໃຫ້ໄດ້ 2 ເມືອງ ຄື: ເມືອງປາກລາຍ, ເມືອງເງິນ.

**ມາດຕາ 3 ຮັບຮອງເອົາມາດຕະການຈັດຕັ້ງປະຕິບັດ**

ເຫັນດີຮັບຮອງເອົາ 15 ມາດຕະການ, ກົນໄກການຈັດຕັ້ງປະຕິບັດ, ການແບ່ງຄວາມຮັບຜິດຊອບ ແລະ ການຕິດຕາມປະເມີນຜົນ ຕາມການສະເໜີຂອງອົງການປົກຄອງແຂວງ, ເພື່ອຮັບປະກັນໃຫ້ການຈັດຕັ້ງປະຕິບັດ ບັນດາຄາດໝາຍຂອງແຜນພັດທະນາເສດຖະກິດ-ສັງຄົມຂອງແຂວງ 05 ປີ ຄັ້ງທີ VII (2021-

2025) ໃຫ້ບັນລຸໄດ້ຕາມຈຸດປະສົງ ແລະ ຄາດໝາຍທີ່ວາງໄວ້, ສະພາປະຊາຊົນແຂວງ ສະເໜີໃຫ້ອົງການປົກຄອງແຂວງເອົາໃຈໃສ່ບາງມາດຕະການເພີ່ມເຕີມ ດັ່ງນີ້:

1) ໃຫ້ບັນດາຂະແໜງການ ແລະ ທ້ອງຖິ່ນ, ຈັດຕັ້ງຜັນຂະຫຍາຍແຜນພັດທະນາເສດຖະກິດ-ສັງຄົມ 5 ປີ ຄັ້ງທີ VII (2021-2025) ຂອງແຂວງ ເປັນ ແຜນການ 5 ປີ ຂອງຂະແໜງຕົນ ພ້ອມທັງຂະຫຍາຍເປັນແຜນງານ, ໂຄງການລະອຽດປະຈຳແຕ່ລະປີ ໂດຍຕິດພັນກັບແຜນຄົນ ແລະ ແຜນງົບປະມານ ຂອງຂະແໜງການ;
2) ໃຫ້ເອົາໃຈໃສ່ການຈັດຕັ້ງປະຕິບັດກົນໄກຄຸ້ມຄອງ, ຕິດຕາມກວດກາການຈັດຕັ້ງປະຕິບັດແຜນງານ, ໂຄງການ ແລະ ກິດຈະກຳ ໃຫ້ຮັບປະກັນຄຸນນະພາບ, ປະສິດທິພາບ ແລະ ປະສິດທິຜົນ ໂດຍເນັ້ນໃສ່ຜົນໄດ້ຮັບ ແລະ ຜົນກະທົບຕົວຈິງ ເປັນຕົວວັດແທກ;
3) ເຊື່ອມສານ ເປົ້າໝາຍການພັດທະນາແບບຍືນຍົງແຫ່ງຊາດ ເຂົ້າໃນແຜນພັດທະນາເສດຖະກິດ-ສັງຄົມ 5 ປີ ຂອງແຂວງ ທີ່ຍັງບໍ່ທັນສະແດງອອກຈະແຈ້ງ;
4) ສືບຕໍ່ຄົ້ນຄວ້າ ມາດຕະການ ແລະ ວິທີການ ໃນການຈັດຫາແຫຼ່ງທຶນເພື່ອຕອບສະໜອງຄວາມຕ້ອງການຂອງການພັດທະນາ ແລະ ຍົກສູງປະສິດທິພາບຂອງການລົງທຶນ ເພື່ອຮັບປະກັນການບັນລຸເປົ້າໝາຍຂອງແຜນການທີ່ກຳນົດ ແລະ ເອົາໃຈໃສ່ໃນການແກ້ໄຂຂອດອຸດຕັນຂອງ ການລົງທຶນເອກະຊົນພາຍໃນ ແລະ ຕ່າງປະເທດ;
5) ຮັບປະກັນການຈັດເກັບລາຍຮັບເຂົ້າງົບປະມານໃຫ້ຄົບຖ້ວນ, ຂຸດຄົ້ນທຸກແຫຼ່ງລາຍຮັບເພີ່ມ, ເອົາໃຈໃສ່ການປະຕິບັດມາດຕະການປະຢັດມັດທະຍັດງົບປະມານໃຫ້ປະກົດຜົນເປັນຈິງ ເພື່ອຫຼຸດຜ່ອນໜີ້ສິນສາທາລະນະ, ຄຸ້ມຄອງລາຍຈ່າຍ ໃຫ້ສອດຄ່ອງກັບລະດັບການຂະຫຍາຍຕົວຂອງເສດຖະກິດ, ໃຫ້ມີປະສິດທິພາບ ແລະ ປະສິດທິຜົນສູງ;
6) ຊຸກຍູ້ສົ່ງເສີມການຜະລິດພາຍໃນ ຕາມເງື່ອນໄຂ, ທ່າແຮງ ແລະ ຈຸດພິເສດຂອງແຂວງ ພາຍໃຕ້ເງື່ອນໄຂໃໝ່ (New Normal) ເພື່ອທົດແທນການນຳເຂົ້າ, ຊຸກຍູ້ການສົ່ງອອກ ແນ່ໃສ່ປັບປຸງຊີວິດການເປັນຢູ່ຂອງປະຊາຊົນໃຫ້ດີຂຶ້ນ;
7) ເອົາໃຈໃສ່ເຂັ້ມງວດການຄຸ້ມຄອງ, ຕິດຕາມ-ກວດກາ ການເໜັງຕີງຂອງລາຄາສິນຄ້າ ຢ່າງເປັນລະບົບ ໂດຍສະເພາະລາຍການສິນຄ້າ ແລະ ການບໍລິການຄວບຄຸມລາຄາ, ພ້ອມທັງກວດຄຸນນະພາບ ແລະ ມາດຕະຖານ ຂອງສິນຄ້າທີ່ນຳເຂົ້າ ເພື່ອບໍ່ໃຫ້ສົ່ງຜົນກະທົບຕໍ່ສຸຂະພາບຂອງຜູ້ບໍລິໂພກ;
8) ຄຸ້ມຄອງ, ຕິດຕາມ ແລະ ກວດກາ ການຊອກຄົ້ນ, ສຳຫຼວດ ແລະ ຂຸດຄົ້ນແຮ່ທາດ ໃຫ້ມີປະສິດທິພາບ, ປະສິດທິຜົນ, ຍືນຍົງ, ປະຢັດ ແລະ ນຳເອົາຜົນປະໂຫຍດສູງສຸດ ມາໃຫ້ແຂວງ ກໍ່ຄືປະເທດຊາດ;
9) ຄົ້ນຄວ້າ ແລະ ກວດກາຄືນການກຳນົດບັນດາຈຸດສຸມການພັດທະນາ ແລະ ຄາດໝາຍສູ້ຊົນແຕ່ລະດ້ານຂອງວຽກງານພັດທະນາຊົນນະບົດ ແລະ ລຶບລ້າງຄວາມທຸກຍາກ ໃຫ້ສອດຄ່ອງກັບເງື່ອນໄຂທ່າແຮງ ແລະ ຄວາມສາມາດຕົວຈິງ;
10) ຜັນຂະຫຍາຍແຜນຈັດສັນທີ່ດິນ, ຄຸ້ມຄອງຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມແບບຮອບດ້ານ ອອກເປັນແຜນນຳໃຊ້ທີ່ດິນອັນລະອຽດ ຂັ້ນເມືອງໃຫ້ສຳເລັດໃນປີ 2025;
11) ຜັນຂະຫຍາຍຍຸດທະສາດ ພັດທະນາອ່າງໂຕ່ງ ໂດຍສະເພາະ 5 ອ່າງບູລິມະສິດຄື: ນ້ຳງຶ້ມ, ນ້ຳຊ່ງ, ນ້ຳຄອບ, ນ້ຳພູນ ແລະ ນ້ຳຮອຍ ທີ່ໄດ້ຮັບຮອງໄປແລ້ວນັ້ນໃຫ້ເປັນອັນລະອຽດ;

12) ເພີ່ມທະວີໃນການຕິດຕາມ, ກວດກາ ແລະ ປະເມີນຜົນກະທົບຕໍ່ສິ່ງແວດລ້ອມ-ສັງຄົມ ແລະ ທຳມະຊາດ ຈາກການພັດທະນາໂຄງການຕ່າງໆ ເປັນຕົ້ນ: ໂຄງການຂຸດຄົ້ນບໍ່ແຮ່, ໂຄງການພັດທະນາໄຟຟ້າ, ໂຄງການກໍ່ສ້າງພື້ນຖານໂຄງລ່າງ ໃຫ້ສອດຄ່ອງຕາມລະບຽບ ແລະ ກົດໝາຍ;

13) ເອົາໃຈໃສ່ໃນການຊຸກຍູ້ຈັດຕັ້ງປະຕິບັດແຜນການ 5 ປີ (2021-2025) ໃຫ້ເປັນຮູບປະທຳ ແນໃສ່ບັນດາຄາດໝາຍທີ່ຍັງບໍ່ທັນບັນລຸ ແລະ ຖົດຖອຍ ຂອງຂະແໜງສຶກສາທິການ ແລະ ກິລາ, ຂະແໜງສາທາລະນະສຸກ;

14) ຊຸກຍູ້ ແລະ ສົ່ງເສີມ ວຽກງານພັດທະນາສີມືແຮງງານ ຕອບສະໜອງຄວາມຕ້ອງການຂອງຕະຫຼາດສີມືແຮງງານ ແລະ ຮັບໃຊ້ການພັດທະນາເສດຖະກິດ-ສັງຄົມ, ສ້າງວຽກເຮັດງານທຳໃຫ້ແຮງງານພາຍໃນແຂວງ, ສ້າງເງື່ອນໄຂໃຫ້ແກ່ແຮງງານເຂົ້າເຖິງສະຫວັດດີການປະກັນສັງຄົມ ທີ່ມີປະສິດທິພາບ;

15) ພັດທະນາຜະລິດຕະພັນດ້ານວັດທະນະທຳ ໃຫ້ເປັນເສດຖະກິດ, ມີຄວາມຫຼາກຫຼາຍ ທັງປະລິມານ ແລະ ຄຸນນະພາບ, ເພີ່ມທະວີການຕິດຕາມກວດກາ ແລະ ປະເມີນການຈັດຕັ້ງປະຕິບັດການສ້າງຄອບຄົວ ແລະ ບ້ານວັດທະນະທຳ ໃຫ້ຕໍ່ເນື່ອງ ແລະ ຮັບປະກັນໃຫ້ມີຄວາມຍືນຍົງ, ປັບປຸງໂຄງລ່າງພື້ນຖານດ້ານການທ່ອງທ່ຽວ ໃຫ້ໄດ້ຕາມມາດຕະຖານ ແລະ ສ້າງວົງຈອນການທ່ອງທ່ຽວໃຫ້ເປັນຜະລິດຕະພັນໃໝ່, ໂຄສະນາ ນະໂຍບາຍຂອງລັດຖະບານໃນການຄວບຄຸມ ແລະ ປ້ອງກັນໄພພິບັດທາງທຳມະຊາດ, ການລະບາດຂອງພະຍາດຕ່າງໆ, ເປັນຕົ້ນ ພະຍາດອັກເສບປອດ ຈາກເຊື້ອຈຸລະໂລກສາຍພັນໃໝ່ (COVID 19).

**ມາດຕາ 4 ການຈັດຕັ້ງປະຕິບັດ**

1. ມອບໃຫ້ອົງການປົກຄອງແຂວງ ຊີ້ນຳບັນດາພະແນກການ, ອົງການລັດທຽບເທົ່າພະແນກ ແລະ ອົງການປົກຄອງເມືອງ ຈັດຕັ້ງປະຕິບັດມະຕິສະບັບນີ້ ຢ່າງເຂັ້ມງວດ.
2. ມອບໃຫ້ຄະນະປະຈຳສະພາປະຊາຊົນແຂວງ, ບັນດາຄະນະກຳມະການ, ສະມາຊິກສະພາປະຊາຊົນແຂວງ ດຳເນີນການຕິດຕາມ ກວດກາ ແລະ ຊຸກຍູ້ ການຈັດຕັ້ງປະຕິບັດມະຕິສະບັບນີ້ ຕາມພາລະບົດບາດ, ສິດ ແລະ ໜ້າທີ່ຂອງຕົນ ຢ່າງເຂັ້ມງວດ.

**ມາດຕາ 5 ຜົນສັກສິດ**

ມະຕິສະບັບນີ້ ມີຜົນສັກສິກນັບແຕ່ວັນລົງລາຍເຊັນ ເປັນຕົ້ນໄປ.

ປະທານສະພາປະຊາຊົນແຂວງ

ເພັງນິລັນ ຄຳພັນເພັງ